**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 2680 /ຍທຂ.
ບໍລິຄຳໄຊ, ວັນທີ 16 ມິຖຸນາ 2026

**ໂຄງການ ສົບທົບທຶນກໍ່ສ້າງທາງເບີ 5387 ແຕ່ແຍກທາງຫລວງແຫ່ງຊາດເລກທີ21-ບ້ານສີບຸນເຮືອງບຸນ, ລວງຍາວ 5.850 ກມ, ໜ້າທາງກ້ວາງ 7 ແມັດ, ປູຢາງຊ່ວງຊຶມຊຶມ, ລວງຍາວ 3.000 ກມ, ໜ້າທາງກ້ວາງ 8 ແມັດ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ.**

**ຫນັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ**

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ ມີຈຸດປະສົງ ປະມູນຈັດຊື້-ຈັດຈ້າງ ໂຄງການ ສົມທົບທຶນສ້ອມແປງທາງປູແຮ່ ທາງຊອຍບ້ານ ໂນນສົມບູນ, ລວງຍາວ 4,141 ກມ, ໜ້າທາງກ້ວາງ 5 ແມັດ, ເມືອງບໍລິຄັນ ແຂວງບໍລິຄຳໄຊ, ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ, ສຳລັບບ້ວງເງິນທີ່ຈະຊຳລະສະສາງແມ່ນໄດ້ສະເໜີເອົາເຂົ້າແຜນສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງແມ່ນ 18 ເດືອນ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ,ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມ ກົດຫມາຍທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄຳໄຊ ຫຼື ທົ່ວປະເທດ.
5. ບໍລິສັດທີ່ມີຄວາມເຫມາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ ໂທລະສັບ/ແຟັກ: 054-212091 ແລະ ພະແນກ ການເງິນ ແຂວງບໍລິຄຳໄຊ, ຂະແໜງການ ຈັດຊື້-ຈັດຈ້າງ, ໂທລະສັບ 020 2887005 ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ **8:00-12:00 ແລະ 13:00-16:00;** ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ເລີ່ມແຕ່ວັນທີ **10 ພຶດສະພາ 2026** ເປັນຕົ້ນໄປ, ໃນລາຄາ 500,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນໃດຫາກຍື່ນຊ້າກ່ອນເວລາ **10:00 ໂມງເຊົ້າ, ຂອງວັນທີ 25 ມິຖຸນາ 2026**; ຈະບໍ່ໄດ້ຮັບພິຈາລະນາ ແລະ ເປີດຊອງ, ເງິນຄ່າຊອງປະມູນຈະບໍ່ໄດ້ສົ່ງຄືນ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ **15 ມິຖຸນາ 2026, ເວລາ 13:00** ໂມງສວຍ.
8. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ **ໃນເວລາ 10:00 ໂມງເຊົ້າ, ຂອງວັນທີ 25 ມິຖຸນາ 2026** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.
9. ເອກະສານປະມູນບໍລິສັດຕ້ອງຂຽນໃບປະຕິຍານຕົນເອງດ້ວຍກຽດສັກສີຂອງບໍລິສັດເພື່ອປະກອບຫນັງສືຄ້ຳປະກັນການປະມູນ, ໂດຍຫນັງສືຄ້ຳປະກັນການປະມູນຕ້ອງແມ່ນຫນັງສືຄ້ຳປະກັນຂອງບໍລິສັດເອງ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ

ວິໄຊ ພູມີ

**ຕິດຕໍ່:**

1. ທ່ານ ສົມພອນ ແສງຈັນເພັງ ຮອງຂະແໜງຂົວທາງ, ພະແນກ ຍທຂ, ໂທ: 020 58048577.
2. ທ່ານ ຄຳປະເສີດ ພັນນະວົງ ຂະແໜງການ ຈັດຊື້-ຈັດຈ້າງ, ພະແນກ ການເງິນ, ໂທ: 020 28870055.

Scanned with CamScanner